AFSCME 3299

# ຄຳຖາມທີ່ຖືກຖາມຢູ່ເລື້ອຍໆ

# ກ່ຽວກັບການຢຸດວຽກປະທ້ວງ ULP ແບບບໍ່ມີກຳນົດ

### ການຢຸດວຽກປະທ້ວງຈະມີຂຶ້ນເມື່ອໃດ? ແລະ ການຢຸດວຽກປະທ້ວງຈະໃຊ້ເວລາດົນສໍ່າໃດ?

ການຢຸດວຽກປະທ້ວງເລີ່ມຕົ້ນຂຶ້ນ ເວລາ 12:00 ໂມງເຊົ້າ (0:00) ຂອງວັນພະຫັດ, ວັນທີ 14 ພຶດສະພາ 2026. ຜູ້ໃດກໍຕາມທີ່ກຳລັງເຮັດວຽກຜຽນ ເມື່ອການຢຸດວຽກປະທ້ວງເລີ່ມຕົ້ນຂຶ້ນ ເວລາ 12:00 ໂມງເຊົ້າ ຂອງ ວັນທີ 14 ພຶດສະພາ 2026, ຄວນສືບຕໍ່ເຮັດວຽກຈົນຮອດເວລາສິ້ນສຸດໂດຍປົກກະຕິຂອງຜຽນນັ້ນ. ການຢຸດວຽກປະທ້ວງແບບບໍ່ມີກຳນົດ ໝາຍຄວາມວ່າ ການຢຸດວຽກປະທ້ວງຈະສືບຕໍ່ ຈົນກວ່າ UC ຈະປະຕິບັດຕາມກົດໝາຍ, ດຳເນີນການດ້ວຍຄວາມສຸດຈະລິດ ແລະ ໃຫ້ສັນຍາທີ່ຕອບສະໜອງຄວາມຕ້ອງການຫຼັກຂອງພວກເຮົາ ແກ່ພວກເຮົາ.

### ເປັນຫຍັງພວກເຮົາຈຶ່ງດຳເນີນການຢຸດວຽກປະທ້ວງແບບບໍ່ມີກຳນົດ?

ຕະຫຼອດເວລາສອງປີທີ່ຜ່ານມາ, UC ໄດ້ປະຕິເສດທີ່ຈະເຈລະຈາຕໍ່ລອງດ້ວຍຄວາມສຸດຈະລິດໃຈ ແລະ ໃຫ້ຂໍ້ສະເໜີທີ່ດ້ອຍຄຸນນະພາບແກ່ພວກເຮົາ. ພວກເຮົາກຳລັງຢຸດວຽກປະທ້ວງ ເພື່ອບັງຄັບໃຫ້ UC ປະຕິບັດຕາມກົດໝາຍ ແລະ ເຈລະຈາຕໍ່ລອງດ້ວຍຄວາມສຸດຈະລິດໃຈ ຈົນກວ່າພວກເຮົາຈະໄດ້ຮັບຂໍ້ສະເໜີແບບຄອບຄຸມ. ໂດຍສະເພາະແລ້ວ,

- UC ໄດ້ຈັດຕັ້ງປະຕິບັດຊຸດຂໍ້ກຳນົດທັງໝົດໂດຍບໍ່ຖືກຕ້ອງຕາມກົດໝາຍ, ລວມທັງ ອັດຕາການດູແລສຸຂະພາບທີ່ເພີ່ມຂຶ້ນສຳລັບຜູ້ເຮັດວຽກ ແລະ
- ນອກຈາກນັ້ນ, UC ຍັງລົ້ມເຫຼວ ແລະ ປະຕິເສດ ໂດຍບໍ່ສອດຄ່ອງກັບກົດໝາຍ ໃນການເຈລະຈາຕໍ່ລອງກັບ AFSCME ກ່ຽວກັບສະຫວັດດີການທີ່ຢູ່ອາໄສສຳລັບຜູ້ເຮັດວຽກແຖວໜ້າ. ຖ້າປ່ອຍໄປໂດຍບໍ່ມີການແກ້ໄຂ, ການປະຕິບັດດ້ານແຮງງານທີ່ບໍ່ເປັນທຳເຫຼົ່ານີ້ຈະເຮັດໃຫ້ພວກເຮົາຕົກຢູ່ໃນສະພາບເສຍປຽບຕໍ່ໄປ.

### ການຢຸດວຽກປະທ້ວງແບບບໍ່ມີກຳນົດເປັນພຽງຕົວເລືອກດຽວໃນເວລານີ້ບໍ?

ຫຼັງຈາກທີ່ເຈລະຈາຕໍ່ລອງ ເປັນເວລາຫຼາຍກວ່າ 2 ປີ, UC ຫາກໍເລີ່ມເຄື່ອນໄຫວກັບບັນຫາບາງຢ່າງ ແຕ່ຍັງປະຕິເສດທີ່ຈະແກ້ໄຂບັນຫາຫຼັກຂອງພວກເຮົາ, ລວມທັງທີ່ຢູ່ອາໄສ. ຂໍ້ສະເໜີຂອງພວກເຂົາຕໍ່າກວ່າທີ່ພວກເຮົາສົມຄວນໄດ້ຮັບ. ໃນຂະນະທີ່ພວກເຮົາສືບຕໍ່ດຳເນີນການ ເພື່ອກົດດັນ UC, ການຢຸດວຽກປະທ້ວງແບບບໍ່ມີກຳນົດຄືສິ່ງຈຳເປັນ ຖ້າ UC ລົ້ມເຫຼວໃນການເຈລະຈາຕໍ່ລອງດ້ວຍຄວາມສຸດຈະລິດ.

### ການເຈລະຈາກັບ UC ຈະສືບຕໍ່ບໍ?

ແມ່ນ, ສະຫະພັນຂອງພວກເຮົາຍັງຄົງເຕັມໃຈ ທີ່ຈະເຂົ້າຮ່ວມການເຈລະຈາທີ່ມີຄວາມໝາຍ.

### ເປັນຫຍັງມັນຈຶ່ງສຳຄັນທີ່ຂ້ອຍຕ້ອງເຂົ້າຮ່ວມ ຖ້າຮ້ອງໃຫ້ມີການຢຸດວຽກປະທ້ວງ?

ການບັງຄັບໃຫ້ UC ເຊື່ອຟັງກົດໝາຍ ແລະ ເຫັນດີກັບສັນຍາທີ່ນຳສະເໜີຄວາມຕ້ອງການທີ່ສຳຄັນທັງໝົດຂອງພວກເຮົາ ຄືສິ່ງສຳຄັນ, ສະນັ້ນ ພວກເຮົາຈຶ່ງບໍ່ຕ້ອງໃຊ້ຊີວິດດ້ວຍເງິນເດືອນໄປວັນໆ. ການຢຸດວຽກປະທ້ວງທີ່ເຂັ້ມແຂງຈະສົ່ງຂໍ້ຄວາມທີ່ຊົງພະລັງໄປຫາ UC, ພ້ອມທັງຄົນເຈັບ, ນັກສຶກສາ ແລະ ສື່ສານມວນຊົນ. ຖ້າ UC ລົ້ມເຫຼວໃນການເຈລະຈາຕໍ່ລອງດ້ວຍຄວາມສຸດຈະລິດ, ສະມາຊິກ AFSCME ທັງໝົດຄວນເຂົ້າຮ່ວມການຢຸດວຽກປະທ້ວງ ແລະ ມາຮ່ວມຂະບວນປະທ້ວງ.

### ໃນຕອນນີ້ ພວກເຮົາຈຳເປັນຕ້ອງເຮັດຫຍັງ ສຳລັບການຢຸດວຽກປະທ້ວງແບບບໍ່ມີກຳນົດ?

ທ່ານຄວນເຂົ້າຮ່ວມການປະຊຸມ ແລະ ການດຳເນີນການຂອງສະຫະພັນ ແລະ ສະແດງການຊ່ວຍເຫຼືອຂອງທ່ານຢ່າງເປີດເຜີຍ ໃນຖານະສະມາຊິກຂອງສະຫະພັນ. ນອກຈາກນັ້ນ, ມັນຍັງເປັນສິ່ງສຳຄັນທີ່ຈະເລີ່ມກຽມຄວາມພ້ອມທາງການເງິນ ໂດຍເກັບທ້ອນເງິນ ແລະ ເຮັດວຽກເພີ່ມຜຽນໃນຕອນນີ້.

### ຖ້າຜຽນຂອງຂ້ອຍຖືກຈັດຢູ່ລະຫວ່າງວັນຢຸດທ້າຍອາທິດ ຫຼັງຈາກ ວັນທີ 14 ພຶດສະພາ, ຂ້ອຍຄວນໄປວຽກບໍ?

ເຈົ້າບໍ່ຄວນໄປວຽກໃນລະຫວ່າງການຢຸດວຽກປະທ້ວງ. ພວກເຮົາຈະຢຸດວຽກປະທ້ວງ ນັບຕັ້ງແຕ່ ວັນທີ 14 ພຶດສະພາ. ການຢຸດວຽກປະທ້ວງແມ່ນ 24/7, ລວມທັງວັນຢຸດທ້າຍອາທິດ, ບໍ່ວ່າຈະເປັນຊົ່ວໂມງປະທ້ວງໃດກໍຕາມ.

## ເກີດຫຍັງຂຶ້ນກັບສະຫວັດດີການດ້ານສຸຂະພາບຂອງຂ້ອຍ ໃນລະຫວ່າງການຢຸດວຽກປະທ້ວງ?

ສະຫວັດດີພາບດ້ານສຸຂະພາບຂອງເຈົ້າຈະສືບຕໍ່ ໃນລະຫວ່າງການຢຸດວຽກປະທ້ວງ. ຍ້ອນກັບໄປໃນປີ 2021, ສະຫະພັນຂອງພວກເຮົາໄດ້ຕໍ່ສູ້ ແລະ ຊະນະ AB 237. ດ້ວຍເຫດນັ້ນ, ນາຍຈ້າງພາກລັດຂອງ California, ເຊັ່ນ: UC, ຈຶ່ງຈະບໍ່ສາມາດຍົກເລີກປະກັນສຸຂະພາບຂອງລູກຈ້າງພວກເຂົາອີກຈັກເທື່ອ ໃນລະຫວ່າງການຢຸດວຽກປະທ້ວງ. ມັນໝາຍຄວາມວ່າ ເຈົ້າສາມາດໃຊ້ສິດທີ່ໄດ້ຮັບການຄຸ້ມຄອງທາງກົດໝາຍຂອງເຈົ້າ ເພື່ອຢຸດວຽກປະທ້ວງ ໂດຍບໍ່ກັງວົນກ່ຽວກັບການສູນເສຍການດູແລສຸຂະພາບ.

## UC ສາມາດເລີກຈ້າງພວກເຮົາໄດ້ ໃນລະຫວ່າງການຢຸດວຽກປະທ້ວງ?

ບໍ່, UC ບໍ່ສາມາດຢຸດວຽກພວກເຮົາໄດ້. ພວກເຮົາມີສິດຕາມກົດໝາຍທີ່ຈະຢຸດວຽກປະທ້ວງ ຕໍ່ການປະຕິບັດດ້ານແຮງງານຢ່າງບໍ່ເປັນທຳຂອງ UC. ມັນຜິດກົດໝາຍສຳລັບ UC ທີ່ຈະແກ້ແຄ້ນ ໂດຍເລີກຈ້າງລູກຈ້າງທີ່ຢຸດວຽກປະທ້ວງ.

## ແມ່ນຫຍັງຄືສິດຕາມກົດໝາຍຂອງຂ້ອຍໃນການຢຸດວຽກປະທ້ວງ ໃນຖານະພະນັກງານລາຍວັນ, ພະນັກງານທົດລອງວຽກ ຫຼື ພະນັກງານຈຳກັດໜ້າທີ່ຢູ່ UC?

ພະນັກງານທຸກຄົນທີ່ໄດ້ຮັບການຄຸ້ມຄອງຈາກຂໍ້ຕົກລົງຂອງ AFSCME ມີສິດຕາມກົດໝາຍທີ່ຈະຢຸດວຽກປະທ້ວງ, ບໍ່ວ່າຈະເປັນພະນັກງານລາຍວັນ, ພະນັກງານຈຳກັດໜ້າທີ່ ຫຼື ພະນັກງານທົດລອງວຽກ. ພາຍໃຕ້ຂໍ້ກຳນົດສະບັບປັດຈຸບັນຂອງພວກເຮົາ, ພະນັກງານຊົ່ວຄາວ, ພະນັກງານລາຍວັນ ແລະ ພະນັກງານທົດລອງວຽກ ແມ່ນສາມາດຖືກເລີກຈ້າງດ້ວຍເຫດຜົນໃດກໍໄດ້ ຍົກເວັ້ນເຫດຜົນທີ່ຜິດກົດໝາຍ, ເຊັ່ນ: ການແກ້ແຄ້ນຍ້ອນການເຄື່ອນໄຫວຂອງສະຫະພັນ (ລວມທັງການຢຸດວຽກປະທ້ວງ). ການແກ້ແຄ້ນພະນັກງານຄົນໃດຄົນໜຶ່ງທີ່ເປັນຕົວແທນຂອງສະຫະພັນ ຫຼື ບໍ່ແມ່ນພະນັກງານບໍລິຫານ ຍ້ອນການເຂົ້າຮ່ວມການຢຸດວຽກປະທ້ວງ, ລວມທັງ ພະນັກງານລາຍວັນ, ພະນັກງານທົດລອງວຽກ ຫຼື ພະນັກງານຈຳກັດໜ້າທີ່ ແມ່ນຜິດກົດໝາຍທັງສິ້ນ. ການແກ້ແຄ້ນທີ່ຜິດກົດໝາຍລວມທັງ: ການຫຼຸດຊົ່ວໂມງມອບໝາຍ ຫຼື ປົກກະຕິຂອງຄົນໃດຄົນໜຶ່ງ, ການປ່ຽນແປງຕາຕະລາງເຮັດວຽກ ແລະ ການລົງວິໄນໃດກໍຕາມ. AFSCME ໄດ້ສືບຕໍ່ ແລະ ຈະສືບຕໍ່ປົກປ້ອງພະນັກງານທີ່ກຳລັງປະສົບກັບການແກ້ແຄ້ນ ເນື່ອງຈາກການເຂົ້າຮ່ວມການຢຸດວຽກປະທ້ວງທີ່ໄດ້ຮັບການຄຸ້ມຄອງທາງກົດໝາຍ ແລະ ການເຄື່ອນໄຫວຂອງສະຫະພັນ. ຖ້າສິ່ງນີ້ເກີດຂຶ້ນ, ກະລຸນາຕິດຕໍ່ຜູ້ນຳ ຫຼື ຜູ້ຈັດງານ MAT ຂອງເຈົ້າໃນທັນທີ.

## ຂ້ອຍຄວນຕອບກັບແນວໃດ ຖ້າຜູ້ຄຸມງານຂອງຂ້ອຍຖາມຂ້ອຍວ່າ ຂ້ອຍຈະຢຸດວຽກປະທ້ວງ ຫຼື ບໍ່ ຫຼື ຂ້ອຍຈະມາວຽກ ຫຼື ບໍ່ ໃນລະຫວ່າງການຢຸດວຽກປະທ້ວງ?

ເຈົ້າບໍ່ຈຳເປັນຕ້ອງຕອບຄຳຖາມໃດໆ ກ່ຽວກັບການເຂົ້າຮ່ວມການຢຸດວຽກປະທ້ວງຂອງເຈົ້າ. UC ອາດຖາມ ແຕ່ບໍ່ມີສິດສັ່ງໃຫ້ເຈົ້າຕອບຄຳຖາມກ່ຽວກັບການເຂົ້າຮ່ວມການຢຸດວຽກປະທ້ວງຂອງເຈົ້າ ຫຼື ກິດຈະກຳອື່ນໆຂອງສະຫະພັນທີ່ໄດ້ຮັບການຄຸ້ມຄອງທາງກົດໝາຍ. ເຈົ້າບໍ່ຄວນເຊັນຫຍັງກໍຕາມ ຈາກຝ່າຍບໍລິການທີ່ເວົ້າເຖິງວ່າ ເຈົ້າວາງແຜນຈະເຮັດວຽກໃນລະຫວ່າງການຢຸດວຽກປະທ້ວງ ຫຼື ບໍ່. ຖ້າຜູ້ຄຸມງານຂອງເຈົ້າສອບຖາມເຈົ້າກ່ຽວກັບການເຂົ້າຮ່ວມຂອງເຈົ້າ, ພວກເຂົາຕ້ອງແຈ້ງໃຫ້ເຈົ້າຮັບຊາບວ່າ ເຈົ້າບໍ່ຈຳເປັນຕ້ອງຕອບຄຳຖາມ ແລະ UC ຈະບໍ່ແກ້ແຄ້ນເຈົ້າຍ້ອນການເຂົ້າຮ່ວມການຢຸດວຽກປະທ້ວງຂອງເຈົ້າ. ຖ້າພວກເຂົາບໍ່ແຈ້ງ, ກະລຸນາຕິດຕໍ່ຜູ້ນຳ MAT ຂອງເຈົ້າໃນທັນທີ.

## ຂ້ອຍເປັນຫ່ວງຄົນເຈັບ ແລະ ນັກສຶກສາຂອງຂ້ອຍ. ເປັນຫຍັງ UC ຈຶ່ງບອກພວກເຮົາວ່າ ການຢຸດວຽກປະທ້ວງຂອງພວກເຮົາຈະສົ່ງຜົນເສຍຕໍ່ນັກສຶກສາ ແລະ ຄົນເຈັບ?

UC ຈະເຮັດທຸກຢ່າງເພື່ອບໍ່ໃຫ້ພວກເຮົາຢຸດວຽກປະທ້ວງ ເຊິ່ງຈະສົ່ງຜົນກະທົບທາງການເງິນຕໍ່ UC. ສະຫະພັນຂອງພວກເຮົາໄດ້ເຮັດວຽກຢ່າງພາກພຽນ ເພື່ອປົກປ້ອງຄົນເຈັບຂອງພວກເຮົາກ່ອນ ແລະ ລະຫວ່າງການຢຸດວຽກປະທ້ວງໃດໆ. ພວກເຮົາໄດ້ໃຫ້ແຈ້ງການແກ່ UC ກ່ຽວກັບຢຸດວຽກປະທ້ວງຂອງພວກເຮົາ ເປັນເວລາລ່ວງໜ້າຫຼາຍກວ່າ 4 ອາທິດ ແລະ ໄດ້ຈັດ ຄະນະສະເພາະກິດເພື່ອປົກປ້ອງຄົນເຈັບ ເຊິ່ງຊ່ວຍໃຫ້ UC ຈັດພະນັກງານເຂົ້າໂຮງໝໍ ໃນກໍລະນີທີ່ເກີດພາວະສຸກເສີນທີ່ແທ້ຈິງໃນລະຫວ່າງການຢຸດວຽກປະທ້ວງ.

## ມີກອງທຶນການຢຸດວຽກປະທ້ວງບໍ?

ການເຂົ້າຮ່ວມການຢຸດວຽກປະທ້ວງຄືການເສຍສະລະ. ສະຫະພັນຂອງພວກເຮົາມີກອງທຶນການຢຸດວຽກປະທ້ວງຢ່າງຈຳກັດ ເພື່ອຈ່າຍເງິນສຳລັບອາຫານ ແລະ ການເດີນທາງໃນການຢຸດວຽກປະທ້ວງ ແລະ ໃຫ້ການຊ່ວຍເຫຼືອໃນຄວາມຍາກລຳບາກ ສຳລັບສະມາຊິກທີ່ຢຸດວຽກປະທ້ວງ. ເງິນຊ່ວຍເຫຼືອການຢຸດວຽກປະທ້ວງ $100/ວັນ ແມ່ນມີໃຫ້ແກ່ສະມາຊິກແຕ່ລະຄົນທີ່ເຂົ້າຮ່ວມເຮັດໜ້າທີ່ແຖວໜ້າການປະທ້ວງ ໜຶ່ງວັນເຕັມ ໃນລະຫວ່າງການຢຸດວຽກປະທ້ວງ. ສະມາຊິກຈະບໍ່ມີສິດໄດ້ຮັບເງິນຊ່ວຍເຫຼືອຄວາມຫຍຸ້ງຍາກໃດໆ ຖ້າພວກເຂົາໄປເຮັດວຽກຢູ່ UC ສຳລັບຜຽນໃດໆ ໃນລະຫວ່າງໄລຍະເວລາການຢຸດວຽກປະທ້ວງ ເວັ້ນເສຍແຕ່ວ່າ ພວກເຂົາຈະເຮັດເຊັ່ນນັ້ນຜ່ານ ຄະນະສະເພາະກິດເພື່ອປົກປ້ອງຄົນເຈັບ ຫຼື ເພາະພວກເຂົາໄດ້ຖືກມອບໝາຍໂດຍ AFSCME ໃຫ້ເຮັດວຽກໃນຕຳແໜ່ງທີ່ຍົກເວັ້ນຈາກການຢຸດວຽກປະທ້ວງ.